# ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS



CHIFENG GOLD | SEPON

CHIFENG GOLD | SEPON

# ສາລະບານ / CONTENTS


1 ຜົນສຳເລັດຂອງ ບໍ່ຄຳ-ທອງ ເຊໂປນຕະຫຼອດໄລຍະ 20 ປີ ຜ່ານມາ
SEPON MINE: 20 YEARS OF ACHIEVMENT

3 ພາກສະເໜີ
INTRODUCTION

5 ບໍ່ຄຳ-ທອງ ເຊໂປນ ຄົບຮອບ 20 ປີ
$20^{TH}$ ANNIVERSARY OF LXML SEPON

7 ຜົນປະໂຫຍດທາງກົງ ແລະ ທາງອ້ອມ ໃຫ້ແກ່ ສປປ ລາວ
DIRECT AND INDIRECT REVENUE TO THE LAO PDR

9 ພວກເຮົາຄິດຫາຄວາມປອດໄພເປັນສິ່ງທຳອິດ
WE THINK SAFETY FIRST

11 ການພັດທະນາຊຸມຊົນ
COMMUNITY DEVELOPMENT

13 ກອງທຶນພັດທະນາຊຸມຊົນ
COMMUNITY TRUST FUND

15 ກອງທຶນຊ່ວຍເຫຼືອຄອບຄົວຜູ້ດ້ອຍໂອກາດ
FUND FOR ASSISTANCE OF DISADVANTAGE GROUP

17 ການອານຸລັກມໍລະດົກ ວັດທະນະທຳ
PRESERVE CULTURAL HERITAGE

19 ການພັດທະນາພື້ນຖານໂຄງລ່າງ
INFRASTRUCTURE IMPROVEMENT

21 ການພັດທະນາບຸກຄະລາກອນ
HUMAN RESOURCES DEVELOPMENT

23 ການປົກປັກຮັກສາ ແລະ ຄຸ້ມຄອງ ສິ່ງແວດລ້ອມ
ENVIRONMENT PROTECTION AND MANAGEMENT

25 ການເກັບກູ້ລະເບີດບໍ່ທັນແຕກ
UXO CLEARANCE

27 ການພັດທະນາບໍ່ແຮ່ໃຕ້ດິນ
UNDERGROUND MINE DEVELOPMENT



$20^{TH}$ ANNIVERSARY OF SEPON MINE




# 20TH ປີ

## ບໍ່ຄຳ-ທອງເຊໂປນ

## ANNIVERSARY OF SEPON MINE

# ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS



CHIFENG GOLD | SEPON

## ພາກສະເໜີ

## OVERVIEW

# ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS

ໂຄງການບໍ່ຄຳ-ທອງ ເຊໂປນ ເປັນໂຄງການຂຸດຄົ້ນບໍ່ແຮ່ ແບບເປີດໜ້າດິນ ແລະ ອຸໂມງໃຕ້ດິນ ຢູ່ເມືອງວິລະບູລີ, ແຂວງ ສະຫວັນນະເຂດ, ພາກໃຕ້ຂອງ ສປປ ລາວ. ບໍລິສັດ ລ້ານຊ້າງ ມີເນໂຣນສ໌ ຈຳກັດ (LXML) ແມ່ນຊື່ຈົດທະບຽນຂອງ ບໍລິສັດ, ເຈົ້າຂອງໂຄງການດຳເນີນງານບໍ່ຄຳ-ທອງ ເຊໂປນ. ບໍລິສັດ ຊີເຟິງ ຈີຫຼົງ ໂກນ ຈຳກັດ (ຊີເຟິງ) ເປັນບໍລິສັດແມ່ ທີ່ຖືຫຸ້ນ 90% ໃນ LXML ແລະ ລັດຖະບານແຫ່ງ ສປປ ລາວ ຖືຫຸ້ນ 10%.

ນັບຕັ້ງແຕ່ ເລີ່ມດຳເນີນງານ ໃນປີ 2003, LXML ໄດ້ຜະລິດແຜ່ນທອງ ໄດ້ຫຼາຍກວ່າ 1,1 ລ້ານໂຕນ ແລະ ຜະລິດຄຳແທ່ງໄດ້ຫຼາຍກວ່າ 1,5 ລ້ານອອນສ໌ ແລະ ໄດ້ປະກອບສ່ວນ US$1,6 ຕື້ ເປັນລາຍຮັບໂດຍກົງ ໃຫ້ແກ່ລັດຖະບານລາວ.

Sepon is an open-pit and underground gold - copper mine in Vilabouly district, Savannakhet province, southern Laos. Lane Xang Minerals Limited (LXML) is the registered name of the company which owns and operates Sepon. Chifeng Jilong Gold Mining Co., Ltd. (Chifeng Gold) owns 90% of LXML, and the Lao Government owns 10%.

Since operations commenced in 2003, LXML Sepon has produced over 1.1 million tonnes of copper cathode and over 1.5 million ounces of gold doré and has contributed over US$1.6 billion in direct revenue to the Lao Government.




## ບໍ່ຄຳ-ທອງ ເຊໂປນ ຄົບຮອບ 20 ປີ

## 20TH ANNIVERSARY OF LXML SEPON

# ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ຈຳກັດ ແມ່ນໄດ້ມີ ການສະເຫຼີມສະຫຼອງ ຄົບຮອບ 20 ປີ ດ້ວຍຄວາມພາກພູມໃຈ. ພວກເຮົາມີຄວາມພາກພູມໃຈທີ່ ຄຳ ແລະ ທອງ ຈາກບໍ່ຄຳ-ທອງ ເຊໂປນ ໄດ້ສົ່ງອອກຂາຍໄປທົ່ວໂລກ ແລະ ອີກຢ່າງໜຶ່ງ ທັງເປັນສິນຄ້າຫຼັກທີ່ເຮັດໃຫ້ເສດຖະກິດມີຄວາມຈະເລີນເຕີບໂຕ ແລະ ຊ່ວຍພັດທະນາປະເທດໃນສອງທົດສະວັດທີ່ຜ່ານມາ. ບໍ່ຄຳ-ທອງ ເຊໂປນ ຍັງຈະສືບຕໍ່ປະກອບສ່ວນອັນມີຄຸນຄ່ານີ້ຕໍ່ໄປ ໃນອີກຫຼາຍປີຂ້າງໜ້າ, ເພື່ອເປັນການຊ່ວຍສ້າງອານາຄົດທີ່ສົດໃສໃຫ້ແກ່ ສປປ ລາວ.

LXML Sepon is celebrating its 20th anniversary with pride. We are proud that gold and copper from Sepon mine are exported around the world, and proud these Lao products have been major contributor to country's economic development over last two decades. The mine commits to continue making a valuable contribution over the years to come, helping to ensure a bright future for the Lao PDR.




## ຜົນປະໂຫຍດທາງກົງ ແລະ ທາງອ້ອມໃຫ້ແກ່ ສປປ ລາວ

## DIRECT AND INDIRECT REVENUE TO THE LAO PDR

ນັບຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, LXML ບໍ່ຄຳ-ທອງ ເຊໂປນ ໄດ້ປະກອບສ່ວນ US$1,7 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ໂດຍຜ່ານການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນກໍມີຜົນປະໂຫຍດທາງອ້ອມ ຜ່ານການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການພັດທະນາທຸລະກິດທ້ອງຖິ່ນ ເຊິ່ງເປັນການປະກອບສ່ວນອັນມະຫາສານ ຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ໃນ ສປປ ລາວ.

Since operation commerce in 2003, LXML Sepon has contributed US$1.7 billion in direct revenue to the government through taxes, royalties, and dividends. Indirect benefits through employment, training, community development, and local business development have also contribute significantly to social and economic development in Lao PDR.

# ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

# SEPON MINE: 20 YEARS OF ACHIEVEMENTS

CHIFENG GOLD | SEPON




# ພວກເຮົາຄິດຫາຄວາມປອດໄພ ເປັນສິ່ງທຳອິດ

# WE THINK SAFETY FIRST

ພວກເຮົາຍຶດຖືຄວາມປອດໄພເປັນສິ່ງທຳອິດ, ພວກເຮົາສືບຕໍ່ສຸມໃສ່ ຍົກລະດັບມາດຕະຖານດ້ານຄວາມ ປອດໄພ, ເພື່ອປ້ອງກັນອຸປະຕິເຫດທີ່ອາດຈະເກີດຂຶ້ນ ແລະ ສືບຕໍ່ເຮັດໃຫ້ ບໍ່ຄຳ-ທອງ ເຊໂປນ ເປັນສະຖານທີ່ເຮັດວຽກທີ່ມີຄວາມປອດໄພກ່ວາເກົ່າ.

We insist on safety first, we have sustained our focus on raising safety standard in order to prevent incidents and make Sepon an even safer place to work.

## ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS



# ການພັດທະນາ ຊຸມຊົນ

# COMMUNITY DEVELOPMENT

LXML ບໍ່ຄຳ-ທອງ ເຊໂປນ ໄດ້ບັນລຸໝາກຜົນທີ່ດີ ໃນວຽກງານພັດທະນາຊຸມຊົນ ໂດຍການຮ່ວມມື ກັບລັດຖະບານລາວ  ແລະ ຊຸມຊົນທ້ອງຖິ່ນ ຢ່າງສະເໝີມາ. ຜົນງານເຫຼົ່ານີ້ ໄດ້ເປັນສິ່ງຂັບເຄື່ອນໃຫ້ ເມືອງວິລະບູລີ ໃຫ້ຫລຸດພົ້ນຈາກສະຖານະເມືອງທີ່ທຸກຍາກທີ່ສຸດໃນປີ 2015. ລາຍໄດ້ຕໍ່ຫົວຄົນຂອງ ປະຊາຊົນທ້ອງຖິ່ນ ເມືອງວິລະບູລີ ບັນລຸ US$900 ຄົນ/ປີ ເຊິ່ງເປັນການເພີ່ມຂຶ້ນ 50% ຕັ້ງແຕ່ປີ 2004.

ຍຸດທະສາດ ການພັດທະນາຊຸມຊົນ ຂອງ LXML ສຸມໃສ່ 4 ເສົາຫຼັກຄື:  ສາທາລະນະສຸກ, ການສຶກ ສາ, ການຄ້ຳປະກັນສະບຽງອາຫານ; ແລະ ການປັບປຸງຊີວິດການເປັນຢູ່ ໃຫ້ແກ່ຊຸມຊົນທ້ອງຖິ່ນ. ແຜນງານພັດທະນາຊຸມຊົນຂອງ LXML ແມ່ນແນໃສ່ຮັກສາຊີວິດການເປັນຢູ່ທີ່ໝັ້ນຄົງ ແລະ ຍືນຍົງ ໂດຍການຮ່ວມມືກັບຊຸມຊົນທ້ອງຖິ່ນ ເຊິ່ງຈະເປັນການປູພື້ນຖານອັນສຳຄັນ ເພື່ອບັນລຸເສດຖະກິດທີ່ ເຂັ້ມແຂງ ພາຍຫຼັງທີ່ ບໍ່ຄຳ-ທອງ ເຊໂປນ ຫາກໄດ້ປິດລົງ. ມາຮອດປັດຈຸບັນ, LXML ໄດ້ປະກອບສ່ວນ ເຂົ້າໃສ່ໂຄງການພັດທະນາຊຸມຊົນ ແລະ ບັນດາຫົວໜ່ວຍທຸລະກິດ ຫຼາຍກວ່າ US$20 ລ້ານ.

LXML Sepon has consistently achieved positive outcomes on community development in partnership with the Lao government and host communities. This resulted in Vilabouly district being removed from the government's list of poorest district in 2015. Per capita income in Vilabouly district has reached US$900 per annum, a 50% increase since 2004.

Our community development strategy focusses on 4 key pillars:  health, education, food security and livelihoods. Our community development programs aim to sustain resilient livelihoods in cooperation with local communities, laying the foundation for successful post-mining economic development. Our contributions to community and business development total over US$20 million.



# ກອງທຶນພັດທະນາ ຊຸມຊົນ

# COMMUNITY TRUST FUND



ກອງທຶນພັດທະນາຊຸມຊົນ (Trust Fund) ມີຈຸດປະສົງໃນການປັບປຸງຊີວິດການເປັນຢູ່ຂອງຊຸມຊົນ ໂດຍການເຂົ້າເຖິງ ການບໍລິການຂັ້ນພື້ນຖານ ແລະ ໃຫ້ສິດອຳນາດແກ່ຊາວບ້ານ ແລະ ເມືອງທີ່ຢູ່ອ້ອມຂ້າງບໍ່ແຮ່ ໃນການກຳນົດ ແລະ ບັນລຸບູລິມະສິດການພັດທະນາຂອງຕົນເອງ ດ້ວຍການມີສ່ວນຮ່ວມ ແລະ ນຳພາຈາກຊຸມຊົນ.

ຕັ້ງແຕ່ປີ 2003 ເປັນຕົ້ນມາ, LXML ໄດ້ລົງທຶນ US$11,7 ລ້ານ ໃສ່ກອງທຶນພັດທະນາຊຸມຊົນ ເພື່ອສ້າງໂຮງຮຽນ, ເສັ້ນທາງ, ຫ້ອງນ້ຳ, ໜອງປາ, ລະບົບສະໜອງນ້ຳສະອາດ, ຕາໜ່າງໄຟຟ້າ ແລະ ໂຄງການພັດທະນາພື້ນຖານໂຄງລ່າງອື່ນໆ ທີ່ຈະສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນຫຼາຍກວ່າ 40,000 ຄົນ ຢູ່ພາຍໃນເມືອງ ວິລະບູລີ.

The Community Trust fund (TF) aim to improve community's livelihood through access to basic need services and empower district and villages around the mine to set and achieve their own development priorities through participatory and community led approach.

Since the Sepon operation commerce US$11.7 million has been invested in the Trust fund to build schools, roads, latrines, fishponds, potable water, electricity, and other infrastructure development, benefiting more than 40,000 people in Vilabouly district.



# ກອງທຶນຊ່ວຍເຫຼືອຄອບຄົວຜູ້ດ້ອຍໂອກາດ

# FUND FOR ASSISTANCE OF DISADVANTAGED GROUP

ກອງທຶນພັດທະນາບ້ານ (FADG) ສະໜອງທຶນຊ່ວຍເຫຼືອລ້າ ລະຫວ່າງ US$8.000 ເຖິງ US$16.000 ອີງຕາມຈຳນວນຄົວເຮືອນ. ໂດຍລວມ ແມ່ນໄດ້ຈັດຕັ້ງປະຕິບັດຫຼາຍກວ່າ 260 ໂຄງການ ພາຍໃນ 47 ຊຸມຊົນ ໂດຍການລົງທຶນທັງໝົດ US$3,4 ລ້ານ.

ປະຊາຊົນພາຍໃນບ້ານ ຈະເປັນຜູ້ເລືອກໂຄງການເອງ ພ້ອມທັງປະກອບສ່ວນຢ່າງຕ່ຳ 10% ໃສ່ໂຄງການ ບໍ່ວ່າຈະເປັນເວລາ, ວັດຖຸ ແລະ ແຮງງານ ເພື່ອຊຸກຍູ້ຄວາມເປັນເຈົ້າການຂອງຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ. ກອງທຶນດັ່ງກ່າວ ແມ່ນໄດ້ສົ່ງເສີມໃຫ້ຊຸມຊົນເຮັດກະສິກຳ ເປັນຕົ້ນແມ່ນ ການລ້ຽງ ໄກ່ພັນໄຂ່, ກົບ, ແບ້, ແລະ ງົວ ເຊິ່ງໄດ້ສ້າງຜົນປະໂຫຍດມະຫາສານໃຫ້ແກ່ຊຸມຊົນທ້ອງຖິ່ນ ອ້ອມຂ້າງບໍ່ຄຳ-ທອງເຊໂປນ.

The Fund for Assistance of Disadvantaged Group (FADG) provides grants ranging from US$8.000 to US$16.000, depending on household size. To date, the Fund has supported implementation of 260 projects in 47 communities accounting for US$3.4 million.

Villagers will choose their own projects and provide in-kind support such as their time, labor, and inputs to enhance beneficiary ownership in the projects. The Fund promotes community agricultural activities namely raising poultry, frog, goat, and cattle which has generated tremendous benefits to communities around Sepon Mine

ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

SEPON MINE: 20 YEARS OF ACHIEVEMENTS



## ການອານຸລັກມໍລະດົກວັດທະນະທຳ

## PRESERVE CULTURAL HERITAGE

ເມືອງວິລະບູລີ ເປັນທີ່ຂະໜານນາມໃນລະດັບໂລກ ວ່າເປັນ ໜຶ່ງໃນສະຖານທີ່ຂຸດຄົ້ນບໍ່ແຮ່ ແລະ ໂລຫະກິດແຫ່ງທຳອິດໃນ ພາກພື້ນອາຊີຕາເວັນອອກສ່ຽງໃຕ້. ການຂຸດຄົ້ນບໍ່ແຮ່ໃນສະໄໝບູຮານ ໄດ້ສືບຕໍ່ໃນສະຖານທີ່ນີ້ຈົນເຖິງປະມານ 1.300 ປີກ່ອນ ( ຫຼື ໃນປະມານປີ ຄສ 700 ), ເຊິ່ງມີການຂຸດຄົ້ນ ແລະ ປຸງແຕ່ງແຮ່ທອງ ທີ່ມີຢ່າງອຸດົມສົມບູນຢູ່ໃນຈຸດ “ເປີ້ນເບົ້າຫຼໍ່” ແລະ “ທົ່ງນາເງືອກ”.

ຕັ້ງແຕ່ປີ 2008, LXML ໄດ້ລົງທຶນຫຼາຍກວ່າ US$1,8 ລ້ານ ເພື່ອອະນຸລັກ 3.000 ປີ ແຫ່ງປະຫວັດສາດລາວ ຜ່ານໂຄງການບູຮານວິທະຍາໜຶ່ງດຽວໃນ ສປປ ລາວ ກໍຄືໃນໂລກ ໂດຍການຮ່ວມມືກັບ ກົມມໍຣະດົກ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລ James Cook ຂອງອົສຕຣາລີ.

Vilabouly is acknowledged internationally as one of the first mining and metallurgy sites in South East Asia. Ancient mining practices continued there about 1,300 years ago, where people excavated rich copper ore and refined it in Peun Baolor and Thong Na Gneuak (Dragon Field) locations.

Since 2008, LXML has invested over US$1.8 million to conserve 3,000 years of Lao history through a unique archaeological program in cooperation with the Department of heritage, ministry of Information, Culture and Tourist, National University of Laos and James Cook University in Australia.

## ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS

CHIFENG GOLD | SEPON



# ການການປັບປຸງ ພື້ນຖານໂຄງລ່າງ

# INFRASTRUCTURE IMPROVEMENT

ນັບຕັ້ງແຕ່ເລີ່ມການດຳເນີນງານ, LXML ໄດ້ລົງທຶນຫຼາຍກວ່າ US$55 ລ້ານ ໃສ່ການປັບປຸງໂຄງລ່າງພື້ນຖານ. ປະມານ US$34 ລ້ານ ເພື່ອສ້າງຕາຂ່າຍໄຟຟ້າແຫ່ງຊາດ. US$20 ລ້ານ ເພື່ອສ້າງ ແລະ ບຳລຸງຮັກສາເສັ້ນທາງທ້ອງຖິ່ນ. ແລະ US$5 ລ້ານ ສະໜັບສະໜູນໃຫ້ແກ່ການປັບປຸງ-ຍົກລະດັບເສັ້ນທາງ 28A.

Since Sepon operation commerce, LXML Sepon has invested over US$55 million in infrastructure improvement. Approximately US$34 million inveted in national electricity grid, US$20 million to bult and maintain local roads, and US$5 million support to the road 28A upgrade.

ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

SEPON MINE: 20 YEARS OF ACHIEVEMENTS



# ການພັດທະນາບຸກຄະລາກອນ

# HUMAN RESOURCES DEVELOPMENT

ຕະຫຼອດອາຍຸການ ຂອງບໍ່ຄໍາ-ທອງ ເຊໂປນ, ມີພະນັກງານກວ່າ10.000 ຄົນ ທີ່ໄດ້ປະກອບສ່ວນຕໍ່ການເຕີບໃຫຍ່ ຂອງ LXML ເຊໂປນ, ໄດ້ຮຽນຮູ້ ຝຶກຝົນທັກສະວິຊາຊີບ ແລະ ສ້າງຊີວິດການເປັນຢູ່ທີ່ດີຂຶ້ນ. ໃນຈໍານວນ ພະນັກງານ ແລະ ຜູ້ຮັບເໝົາທັງໝົດປະມານ 5.000 ຄົນ, 95% ແມ່ນຄົນ ລາວ, 75% ແມ່ນຄົນທ້ອງຖິ່ນ ແລະ 25% ແມ່ນແມ່ຍິງ.

LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດ ເຂົ້າໃສ່ການພັດທະນາ ຊັບພະຍາກອນມະນຸດ ລວມທັງທຶນການສຶກສາ, ການລົງຝຶກງານກັບ ບໍລິສັດ, ແລະ ການຝຶກອົບຮົມຕົວຈິງ.

Over the life of Sepon mine, more than 10,000 employees have contributed to the growth of LXML Sepon, gaining professional skills, and creating better livelihoods. Approximately 5,000 of the total workforces, 95% of workforce are Lao national, 75% are from local communities and 25% of these are women.

LXML has invested millions of dollars in human resource development, including scholarships, internships, on-the-job training, and apprenticeship programs.

CHIFENG GOLD | SEPON

# ການປົກປັກຮັກສາ ແລະ ຄຸ້ມຄອງສິ່ງແວດລ້ອມ

# ENVIRONMENT PROTECTION AND MANAGEMENT




## ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS

ຢູ່ LXML, ຍາມໃດພວກເຮົາກໍຫລຸດຜ່ອນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ປະຕິບັດຕາມລະບຽບມາດຕະຖານສາກົນ ກໍຄື ທ້ອງຖິ່ນ.

ມາດຕະຖານດ້ານສິ່ງແວດລ້ອມຂອງ LXML ເປັນທີ່ຮັບຮູ້ ວ່າເປັນແບບຢ່າງທີ່ດີເລີດຢູ່ໃນ ສປປ ລາວ. ມາຮອດປັດຈຸບັນ, LXML ໄດ້ລົງທຶນ US$20 ລ້ານ ໃນການຄຸ້ມຄອງ, ຟື້ນຟູ ແລະ ຕິດຕາມກິດຈະກຳດ້ານສິ່ງແວດລ້ອມ.

At LXML Sepon, we always minimize our environmental footprint and comply with international and local regulation and standards.

Our environmental standards are recognized as example of excellence in Laos. To date LXML has invested US$20 million in environmental management, rehabilitation, and monitoring activities.

CHIFENG GOLD | SEPON

# ການເກັບກູ້ລະເບີດບໍ່ທັນແຕກ

## UXO CLEARANCE



LXML ໄດ້ລົງທຶນປະມານ US$56 ລ້ານ ໃນວຽກງານເກັບກູ້ລະເບີດບໍ່ທັນແຕກ (UXO). ນັບແຕ່ເລີ່ມດຳເນີນງານມາ, LXML ໄດ້ເກັບກູ້ລະເບີດບໍ່ທັນແຕກ 60.000 ລູກ ພາຍໃນ ເນື້ອທີ່ 6.400 ເຮັກຕາ ພາຍໃນ ແລະ ອ້ອມຂ້າງບໍ່ຄຳ-ທອງ ເຊໂປນ. LXML ຮ່ວມມືກັບກະຊວງປ້ອງກັນປະເທດ, ອົງການ UXO Lao, ແລະ ຄະນະກຳມະການຄຸ້ມຄອງເກັບກູ້ລະເບີດແຫ່ງຊາດ (NRA) ເພື່ອສ້າງຄວາມອາດສາມາດ ແລະ ປັບປຸງວິທີການເກັບກູ້ລະເບີດໃຫ້ແກ່ ນັກວິຊາການລາວ ເພື່ອຄົນຮຸ່ນຕໍ່ໄປ.

LXML has invested approximately US$56 million in UXO clearance. Since operation commenced, LXML has cleared around 6,400 hectares of land, destroying over 60,000 UXO items. In cooperation with ministry of National Defend, UXO Lao, and National regulatory Authority to enhance technical capacity and improve clearance practices for future generations.

## ຜົນສຳເລັດຂອງບໍ່ຄຳ-ທອງ ເຊໂປນ ຕະຫຼອດໄລຍະ 20 ປີຜ່ານມາ

## SEPON MINE: 20 YEARS OF ACHIEVEMENTS




# ການພັດທະນາບໍ່ແຮ່ໃຕ້ດິນທີ່ທັນສະໄໝໃນ ສປປ ລາວ

# DEVELOPMENT OF MODERN UNDERGROUND MINES IN LAO PDR

LXML ໄດ້ເລີ່ມດຳເນີນການຂຸດຄົ້ນບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຂອງ ສປປ ລາວ ເມື່ອວັນທີ 4 ກຸມພາ 2022. ການສຳຫຼວດໃຕ້ດິນຢູ່ ບໍ່ຄຳ-ທອງ ເຊໂປນ ຈະດຳເນີນຕະຫຼອດປີ 2023 ໂດຍຄາດຄະເນປະລິມານແຮ່ສະສົມປະມານ 26 ລ້ານໂຕນ ແລະ ການຜະລິດແຮ່ຈະເພີ່ມຂຶ້ນຈາກ 400.000 ໂຕນໃນປີ 2023 ເປັນ 1,2 ລ້ານໂຕນ ແຕ່ປີ 2024 ຫາ 2030. ບໍ່ໃຕ້ດິນ ຈະຂະຫຍາຍເຖິງ 450 ແມັດໃຕ້ໜ້າດິນ, ໂດຍມີອຸມົງທີ່ອອກແບບ ເລີ່ມຈາກລະດັບ 190 ແມັດ RL (ຈາກລະດັບໜ້ານ້ຳທະເລ) ເລິກລົງ -50m RL (ຈາກລະດັບໜ້ານ້ຳທະເລ), ຍາວ 1.700 ແມັດ, ສູງ 5 ແມັດ, ກວ້າງ 5 ແມັດ ເພື່ອອຳນວຍຄວາມສະດວກໃຫ້ລົດຈັກ ແລະ ເຄື່ອງເຈາະທີ່ທັນສະໄໝ.

LXML conducted the first modern underground mine in Lao PDR on 4 February 2022. Underground exploration at Sepon mine will continue through 2023, with an estimated ore resource of 26 million tonnes and projected ore production to increase from 400,000 tonnes in 2023 to 1.2 million tonnes from 2024 to 2030. The underground mine will extend 450 metres below the surface, with the tunnel designed at 190m RL to -50m RL, 1,700 m long, 5m high and 5m wide to accommodate modern underground excavation and drilling equipment.

20 ປີ
ບໍ່ຄຳ-ທອງເຊໂປນ
ANNIVERSARY OF SEPON MINE

## ຫ້ອງການ LXML ນະຄອນຫຼວງວຽງຈັນ

ຖະໜົນ ບູຣີຈັນ, ບ້ານ ໂພນສີນວນ,
ເມືອງ ສີສັດຕະນາກ, ຕູ້ ປນ. 4486
ນະຄອນຫຼວງວຽງຈັນ, ສປປ ລາວ

## LXML Vientiane Office

Bourichanh Road, phonesinuan
Village, Sisattnak District, PO Box 4486.
Vientiane Cadpital, Lao PDR
**T:** +856 21 268 226
**F:** +856 21 268 201
E: LXML.Infomation@lxml.la
Website: LXML.LA




CHIFENG GOLD | SEPON